# ໃບສັ່ງຊື້

ຂໍ້ກຳນົດ ແລະ ເງື່ອນໄຂ ມາດຕະຖານຂອງ ANZ ລາວ

1) ໂດຍການຍອມຮັບເອົາໃບສັ່ງຊື້ນີ້ ສຳລັບສິນຄ້າ ຫຼື ການບໍລິການທີ່ໄດ້ຖືກສັ່ງຊື້ຕາມທີ່ອະທິບາຍໄວ້ໃນເອກະສານສະບັບນີ້, ທ່ານ (ນິຕິບຸກຄົນທີ່ມີຊື່ເປັນຜູ້ສະໜອງ) ຕົກລົງເຫັນດີວ່າ ເງື່ອນໄຂເຫຼົ່ານີ້ນຳໃຊ້ ໂດຍບໍ່ມີການຍົກເວັ້ນເງື່ອນໄຂອື່ນ (ລວມທັງເງື່ອນໄຂໃນໃບສັ່ງສິນຄ້າ ຫຼື ໃບເກັບເງິນຂອງທ່ານ). ບໍ່ມີຂໍ້ກຳນົດ ຫຼື ເງື່ອນໄຂການສະໜອງອື່ນໃດ ທີ່ຈະມີຜົນບັງຄັບໃຊ້ ເວັ້ນເສຍແຕ່ຈະເຮັດເປັນລາຍລັກອັກສອນ ແລະ ລົງນາມໂດຍຜູ້ຮ້ອງຂໍຂອງ ANZ ທີ່ໄດ້ຮັບອະນຸຍາດ. ຖ້າໃບສັ່ງຊື້ນີ້ອ້າງເຖິງ ສັນຍາທີ່ລົງນາມຢ່າງຖືກຕ້ອງ ລະຫວ່າງ ທ່ານ ແລະ ກຸ່ມທະນາຄານ ອົດສະຕາລີ ແລະ ນິວຊີແລນ ຈຳກັດ ສາຂາລາວ ("**ANZ**"), ເງື່ອນໄຂຂອງສັນຍາຈະຖືເປັນສ່ວນໜຶ່ງຂອງໃບສັ່ງຊື້ສະບັບນີ້ ຍົກເວັ້ນມີການລະບຸໄວ້ເປັນຢ່າງອື່ນຢ່າງຊັດເຈນ ຫຼື ໃນກໍລະນີທີ່ເງື່ອນໄຂຂັດກັບໃບສັ່ງຊື້ນີ້, ໃນກໍລະນີດັ່ງກ່າວ ເງື່ອນໄຂຂອງໃບສັ່ງຊື້ນີ້ຈະມີຜົນບັງຄັບໃຊ້ເໜືອກວ່າ.

2) ຖ້າທ່ານບໍ່ເຫັນດີທີ່ຈະປະຕິບັດຕາມທຸກດ້ານຂອງໃບສັ່ງຊື້ນີ້ ທ່ານຄວນປະຕິເສດໃນທັນທີ ໂດຍການແຈ້ງໃຫ້ຜູ້ຮ້ອງຂໍຂອງ ANZ ທີ່ເປັນຜູ້ອອກຄຳສັ່ງຊື້. ຖ້າທ່ານຍອມຮັບໃບສັ່ງຊື້, ANZ ອາດຂໍໃຫ້ທ່ານຢືນຢັນການຍອມຮັບດັ່ງກ່າວເປັນລາຍລັກອັກສອນ.

3) ລາຄາ ໃນ ຫຼື ທີ່ຄັດຕິດມາກັບໃບສັ່ງຊື້ນີ້ ເປັນລາຄາທີ່ເປັນສະກຸນເງິນກີບ ທີ່ແນ່ນອນ (ເວັ້ນແຕ່ຈະລະບຸສະກຸນເງິນອື່ນໃນໃບສັ່ງຊື້ນີ້) ແລະ ສາມາດປ່ຽນແປງໄດ້ຖ້າຫາກວ່າ ANZ ຕົກລົງເຫັນດີເທົ່ານັ້ນ. ລາຄາດັ່ງກ່າວ ລວມທັງຄ່າຂົນສົ່ງ, ຄ່າຫຸ້ມຫໍ່, ຄ່າປະກັນໄພ ແລະ ຄ່າຈັດສົ່ງ, ແຕ່ຈະຕ້ອງລະບຸລາຍລະອຽດຕ່າງຫາກໃນແຕ່ລະໃບເກັບເງິນ.

4) ຄູ່ສັນຍາບໍ່ຄາດຫວັງວ່າ ການສະໜອງຕາມໃບສັ່ງຊື້ນີ້ຈະກ່ຽວຂ້ອງກັບປະເທດອົດສະຕາລີ. ໃນກໍລະນີທີ່ທ່ານເຮັດການສະໜອງ ພາຍໃຕ້ໃບສັ່ງຊື້ນີ້ ທີ່ກ່ຽວຂ້ອງກັບປະເທດອົດສະຕຣາລີ, ທ່ານຕ້ອງແຈ້ງໃຫ້ ANZ ຊາບເປັນລາຍລັກອັກສອນກ່ຽວກັບເລື່ອງດັ່ງກ່າວ ໂດຍໃສ່ ໝາຍເຫດທີ່ເໝາະສົມໃນໃບເກັບເງິນທີ່ກ່ຽວຂ້ອງ ລະບຸລາຍລະອຽດວ່າການສະໜອງ ແມ່ນ 'ກ່ຽວຂ້ອງກັບປະເທດອົດສະຕາລີ'.

5) ຄ່າທຳນຽມ ແລະ ອາກອນ

ກ) ອາກອນໃດໆທີ່ກ່ຽວຂ້ອງ ຈະຕ້ອງລະບຸແຍກຕ່າງຫາກໃນໃບເກັບເງິນຂອງທ່ານ ແລະ ຈະຕ້ອງຖືກໂອນໂດຍ ANZ ໃຫ້ແກ່ທ່ານ ແລະ ຕ້ອງຊຳລະ ພ້ອມກັນກັບຄ່າທຳນຽມ ໂດຍສອດຄ່ອງກັບຂໍ້ 7.

ຂ) ເວັ້ນແຕ່ລະບຸໄວ້ເປັນຢ່າງອື່ນຢ່າງຈະແຈ້ງ, ຄ່າຕອບແທນທາງທີ່ເປັນເງິນທັງໝົດທີ່ຕ້ອງຈ່າຍໃຫ້ພາຍໃຕ້ ຫຼື ອີງຕາມໃບສັ່ງຊື້ນີ້ ແມ່ນລວມອາກອນມູນຄ່າເພີ່ມ.

ຄ) ເພື່ອຫຼີກລ່ຽງຂໍ້ສົງໄສ, ແຕ່ລະຝ່າຍຈະຕ້ອງຮັບຜິດຊອບອາກອນທີ່ເກັບຈາກລາຍໄດ້ຂອງຕົນ ທີ່ກ່ຽວຂ້ອງກັບໃບສັ່ງຊື້ນີ້.

6) ເອກະສານທັງໝົດ, ລວມທັງ ໃບເກັບເງິນ, ໃບສົ່ງສິນຄ້າ, ແລະ ຢູ່ດ້ານນອກຂອງສິ່ງຫຸ້ມຫໍ່, ຈະຕ້ອງລະບຸເລກທີໃບສັ່ງຊື້ທີ່ຖືກຕ້ອງ, ຜູ້ຮ້ອງຂໍຂອງ ANZ ແລະ, ຖ້າມີ ເລກລຳດັບ ແລະ ໝາຍເລກຊັບສິນ.

ໃບເກັບເງິນຕ້ອງປະກອບດ້ວຍໃບເກັບເງິນອາກອນທີ່ຖືກຕ້ອງຕາມກົດ ໝາຍຂອງ ສປປ ລາວ ("ໃບເກັບເງິນອາກອນທີ່ຖືກຕ້ອງ"), ຕ້ອງລະບຸໝາຍເລກໃບສັ່ງຊື້ຂອງ ANZ ແລະ ໝາຍເລກ ໃບທະບຽນທຸລະກິດ / ໃບອະນຸຍາດການລົງທຶນ ຂອງທ່ານ ແລະ ຕ້ອງລະໜອງລາຍລະອຽດຂອງບັນຊີທະນາຄານຂອງທ່ານ ທີ່ສາມາດຝາກເງິນໂດຍກົງໄດ້. ໃບເກັບເງິນທີ່ບໍ່ກົງກັບເງື່ອນໄຂເຫຼົ່ານີ້ຈະບໍ່ຖືກຍອມຮັບສໍາລັບການຈ່າຍ.

7) ANZ ຈະຈ່າຍເງິນຕາມໃບເກັບເງິນທີ່ອອກໃຫ້ຢ່າງຖືກຕ້ອງ ພາຍໃນ 30 ວັນ ຫຼັງຈາກໄດ້ຮັບໃບເກັບເງິນ. ໃບເກັບເງິນຈະຕ້ອງສົ່ງໄປຫາທີ່ຢູ່ໃບບິນທີ່ລະບຸໄວ້ໃນໃບສັ່ງຊື້ນີ້. ການຊໍາລະເງິນໃດໆ ອາດເຮັດຂຶ້ນໂດຍໃຊ້ດຸນພິນິດຂອງ ANZ ແຕ່ພຽງຜູ້ດຽວ ໂດຍການໂອນເງິນທາງເອເລັກໂຕຣນິກ ໄປຫາບັນຊີທະນາຄານຂອງທ່ານ ຕາມລາຍລະອຽດທີ່ລະບຸໄວ້ໃນໃບສັ່ງຊື້ນີ້. ANZ ຈະບໍ່ຍອມຮັບ ແລະ ຈະບໍ່ມີໜ້າທີ່ຕ້ອງຊໍາລະເງິນ, ໃບເກັບເງິນອາກອນໃດໆ ທີ່ບໍ່ສອດຄ່ອງກັບຂໍ້ກໍານົດທີ່ລະບຸໄວ້ຂ້າງເທິງ ຫຼື ບໍ່ແມ່ນໃບເກັບເງິນອາກອນທີ່ຖືກຕ້ອງ.

8) ເພື່ອໃຫ້ເປັນທີ່ຍອມຮັບຂອງ ANZ, ສິນຄ້າ ແລະ ການບໍລິການທັງໝົດທີ່ທ່ານສະໜອງໃຫ້ ຈະຕ້ອງມີຄຸນນະພາບທາງການຄ້າ ແລະ ເໝາະສົມກັບວັດຖຸປະສົງທີ່ກ່ຽວຂ້ອງ ແລະ ຕ້ອງສອດຄ່ອງກັບ:

ກ) ຕົວຢ່າງໃດໆ ທີ່ທ່ານສະໜອງໃຫ້, ລວມທັງການຈັດສົ່ງກ່ອນໜ້າ ຖ້າມີການຮ້ອງຂໍ;

ຂ) ກົດໝາຍ, ປະມວນກົດໝາຍ ແລະ ມາດຕະຖານທີ່ກ່ຽວຂ້ອງທັງໝົດ;

ຄ) ຂໍ້ມູນສະເພາະທີ່ຜູ້ຜະລິດເຜີຍແຜ່; ແລະ

ງ) ຂໍ້ມູນສະເພາະ ຫຼື ຂໍ້ກໍານົດອື່ນໃດ ທີ່ ANZ ແຈ້ງໃຫ້ຊາບ, ລວມທັງຂໍ້ກໍານົດໃດໆ ທີ່ຄັດຕິດມາກັບໃບສັ່ງຊື້ນີ້.

9) ທ່ານຮັບປະກັນວ່າ:

ກ) ທ່ານມີກໍາມະສິດທີ່ຖືກຕ້ອງໃນສິນຄ້າ ແລະ ໄດ້ຮັບອະນຸຍາດໃຫ້ຂາຍໃຫ້ແກ່ ANZ;

ຂ) ທ່ານມີ ແລະ ຈະຮັກສາໃບອະນຸຍາດ ຫຼື ການອະນຸຍາດທີ່ກ່ຽວຂ້ອງທັງໝົດ ສໍາລັບການສະໜອງສິນຄ້າ ຫຼື ການບໍລິການ; ແລະ

ຄ) ການໃຊ້ສິນຄ້າ ຫຼື ການບໍລິການຂອງ ANZ ຈະບໍ່ລະເມີດສິດຂອງບຸກຄົນທີສາມ, ລວມທັງສິດໃນຊັບສິນທາງປັນຍາ ("IP").

10) ຖ້າສິນຄ້າ ຫຼື ການບໍລິການໃດໆບໍ່ສອດຄ່ອງຕາມການກໍານົດຂອງຂໍ້ກໍານົດ ແລະ ເງື່ອນໄຂເຫຼົ່ານີ້ ຫຼື ໃບສັ່ງຊື້ (ແລະ ການບໍ່ເປັນໄປຕາມຂໍ້ກໍານົດນັ້ນ ບໍ່ໄດ້ເກີດຈາກການຜິດສັນຍາຂອງ ANZ), ANZ ອາດ (ຖ້າແມ່ນສິນຄ້າ) ສົ່ງຄືນສິນຄ້າໃຫ້ແກ່ທ່ານ ແລະ ຮຽກຮ້ອງໃຫ້ມີການສ້ອມແປງ ຫຼື ປ່ຽນແທນໃໝ່ ຫຼື ສົ່ງເງິນຄືນທັນທີ; ແລະ (ຖ້າແມ່ນການບໍລິການ) ຮຽກຮ້ອງໃຫ້ມີການປະຕິບັດຄືນໃໝ່ ໂດຍບໍ່ມີຄ່າໃຊ້ຈ່າຍເພີ່ມເຕີມກັບ ANZ, ຫຼື ການສົ່ງເງິນຄືນ. ໂດຍການດໍາເນີນການຢ່າງສົມເຫດສົມຜົນ, ANZ ອາດຍົກເລີກໃບສັ່ງຊື້ທັງໝົດ ດ້ວຍເຫດຜົນ ແລະ ສົ່ງຄືນສິນຄ້າທັງໝົດໃຫ້ແກ່ທ່ານ ແລະ ຮຽກຮ້ອງໃຫ້ສົ່ງເງິນຄືນ ລວມທັງໃນກໍລະນີທີ່ທ່ານບໍ່ສາມາດປະຕິບັດຕາມຂໍ້ກໍານົດໃນການຈັດສົ່ງຂອງ ANZ ທີ່ລະບຸໄວ້ໃນໃບສັ່ງຊື້. ທ່ານຈະຕ້ອງຮັບຜິດຊອບຄ່າຂົນສົ່ງ, ຄ່າຫຸ້ມຫໍ່ ແລະ ຄ່າໃຊ້ຈ່າຍອື່ນໆທັງໝົດທີ່ກ່ຽວຂ້ອງກັບການສົ່ງຄືນສິນຄ້າ. ການຍົກເລີກໂດຍ ANZ, ພາຍໃຕ້ຂໍ້ນີ້ດ້ວຍເຫດຜົນນັ້ນ ຈະບໍ່ມີຄວາມຮັບຜິດຊອບໃດໆເພີ່ມເຕີມ.

**ຂໍ້ເຫຼົ່ານີ້ນໍາໃຊ້**

**ຖ້າຫາກເປັນການສະໜອງສິນຄ້າ**

11) ໃນຂອບເຂດທີ່ອະນຸຍາດໂດຍກົດໝາຍທີ່ກ່ຽວຂ້ອງ ແລະ ຂຶ້ນກັບຂໍ້ກຳນົດຂອງສັນຍາຊື້, ກຳມະສິດໃນສິນຄ້າ, ແລະ ຄວາມສ່ຽງໃນການສູນເສຍ ຫຼື ຄວາມເສຍຫາຍຕໍ່ສິນຄ້າ ຈະຕົກເປັນຂອງ ANZ ເມື່ອມີການຍອມຮັບເອົາສິນຄ້າໂດຍ ANZ, ເຖິງແມ່ນວ່າ ANZ ຍັງບໍ່ໄດ້ຊຳລະເງິນຄ່າສິນຄ້າໃນເວລາທີ່ຮັບເອົາສິນຄ້າ. ກຳມະສິດໃນສິນຄ້າ ສາມາດຕົກເປັນຂອງ ANZ ເມື່ອມີການຊຳລະຄ່າສິນຄ້າ, ເຖິງແມ່ນວ່າທ່ານຍັງບໍ່ທັນໄດ້ສົ່ງມອບສິນຄ້າກໍ່ຕາມ.

12) ການຈັດສົ່ງຈະໄດ້ຮັບການຍອມຮັບກໍ່ຕໍ່ເມື່ອ:

ກ) ສິນຄ້າທັງໝົດທີ່ສັ່ງ ແມ່ນມາຮອດໃນການຈັດສົ່ງຄັ້ງດຽວ (ເວັ້ນແຕ່ຈະລະບຸ ຫຼື ຕົກລົງກັນໄວ້ຢ່າງອື່ນໂດຍຜູ້ຮ້ອງຂໍຂອງ ANZ);

ຂ) ເຄື່ອງຂອງທັງໝົດໄດ້ຖືກຫຸ້ມຫໍ່ຢ່າງປອດໄພ ແລະ ຖືກລະບຸຕາມທີ່ ANZ ກຳນົດເປັນແຕ່ລະໄລຍະ ເພື່ອປ້ອງກັນຄວາມເສຍຫາຍ ແລະ ເພື່ອໃຫ້ມີການເກັບຮັກສາ ແລະ ການຄວບຄຸມສິນຄ້າຢ່າງເໝາະສົມ; ແລະ

ຄ) ຕູ້ຄອນເທນເນີ້ ແຕ່ລະຕູ້ມີໃບສົ່ງສິນຄ້າ ເຊິ່ງມີລາຍລະອຽດກ່ຽວກັບສິ່ງຂອງພາຍໃນ ແລະ ສິ່ງຕ່າງໆ ທີ່ລະບຸໃນຂໍ້ 6.

13) ສິນຄ້າຈະຖືກຮັບເອົາ ກໍ່ຕໍ່ເມື່ອ ANZ ໄດ້ແກະການຫຸ້ມຫໍ່ ແລະ ກວດກາແລ້ວເທົ່ານັ້ນ, ບໍ່ວ່າຈະເກີດຂຶ້ນໃນເວລາໃດ. ANZ ອາດຈັດສົ່ງສິນຄ້າເຂົ້າໄປໃນສາງເກັບມ້ຽນໂດຍບໍ່ມີການກວດກາສິນຄ້າໃນເວລາທີ່ມີການສົ່ງສິນຄ້າ. ການທີ່ ANZ ມີການຊຳລະເງິນຕາມໃບເກັບເງິນໃດໆ ບໍ່ຖືເປັນການຍອມຮັບເອົາສິນຄ້າທີ່ກ່ຽວຂ້ອງກັບໃບເກັບເງິນ ແລະ ການຊຳລະເງິນຈະຂຶ້ນຢູ່ກັບພັນທະຂອງທ່ານທີ່ຈະສົ່ງເງິນຄືນໃນທັນທີ ສຳລັບລາຍການສິນຄ້າໃດໆ ທີ່ ANZ ກວດພົບໃນພາຍຫຼັງວ່າບໍ່ສາມາດຍອມຮັບເອົາໄດ້.

14) ໃນກໍລະນີທີ່ຕ້ອງມີການຕິດຕັ້ງສິນຄ້າ, ທ່ານຈະຕ້ອງຕິດຕັ້ງສິນຄ້າ ແລະ ຢືນຢັນວ່າສິນຄ້າສາມາດໃຊ້ງານໄດ້ຢ່າງຖືກຕ້ອງ ແລະ ສອດຄ່ອງກັບການຮັບປະກັນໃນເງື່ອນໄຂຂອງໃບສັ່ງຊື້ເຫຼົ່ານີ້.

15) ທ່ານຕ້ອງສ້ອມແປງ ຫຼື ປ່ຽນແທນຂໍ້ບົກພ່ອງ ຫຼື ຄວາມເສຍຫາຍຕໍ່ສິນຄ້າ (ນອກຈາກຄວາມເສຍຫາຍທີ່ເກີດຈາກ ANZ) ທີ່ໄດ້ລະບຸໄວ້ ພາຍໃນ 12 ເດືອນ ຫຼັງຈາກການສົ່ງສິນຄ້າ, ດ້ວຍຄ່າໃຊ້ຈ່າຍຂອງທ່ານເອງ ໂດຍໄວທີ່ສຸດເທົ່າທີ່ຈະເປັນໄດ້ ຢ່າງສົມເຫດສົມຜົນ ຫຼັງຈາກທີ່ ANZ ແຈ້ງໃຫ້ທ່ານຊາບ.

### ຂໍ້ເຫຼົ່ານີ້ມີນຳໃຊ້ ຖ້າຫາກເປັນການສະໜອງການບໍລິການ

16) ທ່ານຈະຕ້ອງແນະນຳ ANZ ໃນທັນທີ ກ່ຽວກັບຄວາມຂັດແຍ່ງທາງຜົນປະໂຫຍດທີ່ເກີດຂຶ້ນຕົວຈິງ ຫຼື ມີແນວໂນ້ມທີ່ຈະເກີດຂຶ້ນ ລະຫວ່າງການສະໜອງການບໍລິການໃຫ້ແກ່ ANZ. ຖ້າ ANZ ພິຈາລະນາວ່າ ຂໍ້ຂັດແຍ່ງນັ້ນບໍ່ສາມາດຍອມຮັບໄດ້ໂດຍ ANZ, ANZ ອາດຍົກເລີກໃບສັ່ງຊື້ໂດຍຝ່າຍດຽວ ໂດຍການແຈ້ງເປັນລາຍລັກອັກສອນໄປຫາທ່ານ ໂດຍມີຜົນບັງຄັບໃຊ້ໃນທັນທີເມື່ອທ່ານໄດ້ຮັບແຈ້ງການຈາກ ANZ. ໃນກໍລະນີນີ້, ທ່ານຕ້ອງຢຸດເຊົາໃຫ້ບໍລິການທີ່ໃບສັ່ງຊື້ທີ່ຖືກຍົກເລີກ, ແລະ ໃຊ້ຄວາມພະຍາຍາມຢ່າງສົມເຫດສົມຜົນ ເພື່ອຫຼຸດຕົ້ນທຶນ ແລະ ຄ່າໃຊ້ຈ່າຍຂອງທ່ານ. ANZ ຈະຊຳລະຄ່າບໍລິການທີ່ທ່ານໄດ້ສະໜອງໃຫ້ ANZ ໃນວັນທີຂອງການຍົກເລີກ.

17) ຊັບສິນທາງປັນຍາໃໝ່ (ລວມທັງ ລິຂະສິດ) ທີ່ທ່ານສ້າງຂຶ້ນໃນການໃຫ້ບໍລິການ ຈະເປັນຂອງ ANZ ແລະ ທ່ານຈະມອບໂອນສິດໃນຊັບສິນທາງປັນຍາດັ່ງກ່າວໃຫ້ແກ່ ANZ ນັບແຕ່ວັນທີ່ສ້າງຂຶ້ນ. ທ່ານອະນຸຍາດໃຫ້ຢ່າງຖາວອນ,

ບໍ່ສາມາດຍົກເລີກໄດ້, ບໍ່ຜູກຂາດ, ທົ່ວໂລກ ໃນການໃຊ້ສິດໃນຊັບສິນທາງປັນຍາທັງໝົດ ທີ່ທ່ານບໍ່ໄດ້ມອບໂອນໃຫ້ກັບ ANZ ແຕ່ ທ່ານເປັນເຈົ້າຂອງ ຫຼື ໄດ້ອະນຸຍາດ ພາຍໃຕ້ຂອບເຂດທີ່ການອະນຸຍາດດັ່ງກ່າວມີຄວາມຈຳເປັນເພື່ອໃຫ້ ANZ ໄດ້ຮັບຜົນປະໂຫຍດຈາກການບໍລິການ. ໂດຍບໍ່ຄຳນຶງເຖິງຂໍ້ກຳນົດອື່ນໃດ ໃນໃບສັ່ງຊື້ນີ້, ທ່ານຕ້ອງບໍ່ໃຊ້ເຄື່ອງໝາຍການຄ້າ, ໂລໂກ້, ຊື່ທາງທຸລະກິດ ຫຼື ຊື່ຍີ່ຫໍ້ສິນຄ້າ (ບໍ່ວ່າຈະຈົດທະບຽນ ຫຼື ບໍ່ຈົດທະບຽນ) ຂອງ ANZ (ຫຼື ສະມາຊິກຂອງກຸ່ມ ANZ) ໃນທາງໃດໆ (ລວມທັງໃນສື່ໂຄສະນາ ຫຼື ເທິງເວັບໄຊໃດໆ) ໂດຍບໍ່ໄດ້ຮັບການເຫັນເປັນລາຍລັກອັກສອນຈາກ ANZ ກ່ອນ.

18) ທ່ານຈະຕ້ອງຮັບປະກັນວ່າ ທຸກຄົນທີ່ທ່ານສະໜອງໃຫ້ແກ່ ANZ ເພື່ອປະຕິບັດການບໍລິການນັ້ນ ມີຄຸນສົມບັດທີ່ເໝາະສົມ ແລະ ມີປະສົບການພຽງພໍ, ເຮັດວຽກຢ່າງດຸໝັ່ນ, ເຊື່ອຖືໄດ້ ແລະ ມີມາດຕະຖານສູງ, ປະຕິບັດຕົນດ້ວຍຄວາມຊື່ສັດ, ປະຕິບັດຕາມນະໂຍບາຍຂອງ ANZ, ລວມທັງນະໂຍບາຍດ້ານສຸຂະພາບ ແລະ ຄວາມປອດໄພດ້ານອາຊີບ, ແລະ ປະຕິບັດຕາມເງື່ອນໄຂຂອງໃບສັ່ງຊື້ນີ້. ຖ້າວ່າ ANZ ມີຄວາມກັງວົນໃດໆ ກ່ຽວກັບຄວາມສາມາດ, ການປະຕິບັດງານ ຫຼື ທັດສະນະຄະຕິຂອງບຸກຄົນໃດໆ ທີ່ທ່ານວ່າຈ້າງໃຫ້ປະຕິບັດການບໍລິການໃຫ້ແກ່ ANZ, ທ່ານຈະຕ້ອງກອດຄືນກັບ ANZ ການປະຕິບັດວຽກຂອງບຸກຄົນດັ່ງກ່າວກັບ ANZ ແລະ ເມື່ອ ANZ ຮ້ອງຂໍຢ່າງສົມເຫດສົມຜົນ, ທ່ານຈະຕ້ອງປ່ຽນແທນບຸກຄົນດັ່ງກ່າວ ດ້ວຍບຸກຄົນອື່ນ ທີ່ເປັນທີ່ຍອມຮັບໂດຍ ANZ.

19) ທ່ານສາມາດໃຊ້ຜູ້ຮັບເໝົາຊ່ວງຕໍ່ ຫຼື ບຸກຄະລາກອນແທນບຸກຄະລາກອນທີ່ມີຊື່ ຫຼື ອະທິບາຍໄວ້ໃນເອກະສານທີ່ຄັດຕິດກັບໃບສັ່ງຊື້ນີ້ໄດ້ ສະເພາະແຕ່ໃນກໍລະນີທີ່ ANZ ຕົກລົງເຫັນດີເປັນລາຍລັກອັກສອນເທົ່ານັ້ນ.

20) ທ່ານຕ້ອງເຮັດການປະກັນໄພ ຫຼື ສັນຍາປະກັນໄພທຸກຢ່າງທີ່ຈຳເປັນ ເພື່ອຄຸ້ມກັນການສະໜອງການບໍລິການຫຼື ການສະໜອງສິນຄ້າ ພາຍໃຕ້ໃບສັ່ງຊື້ນີ້ ເຊັ່ນ: ການລະເລີຍດ້ານວິຊາຊີບ, ຄວາມຮັບຜິດຊອບຂອງຜູ້ອຳນວຍການ ແລະ ເຈົ້າໜ້າທີ່, ການປະກັນໄພຄວາມຮັບຜິດຊອບທົ່ວໄປຂອງບໍລິສັດ. ທ່ານຕົກລົງເຫັນດີວ່າຂໍ້ກຳນົດ ແລະ ເງື່ອນໄຂທີ່ຄວບຄຸມການປະກັນໄພທີ່ກ່າວມານັ້ນ, ລວມທັງແຕ່ບໍ່ຈຳກັດ ການລວມເອົາ ແລະ ການບໍ່ລວມເອົາ, ຕາມທີ່ອາດຈະໄດ້ຮັບການອະນຸຍາດພາຍໃຕ້ກົດໝາຍວ່າດ້ວຍການປະກັນໄພ (ສະບັບເລກທີ 78/ສພຊ, 29 ພະຈິກ 2019, ແລະ ຫຼື ສະບັບດັດແກ້ໃນແຕ່ລະໄລຍະ) ແລະ ຈະຖືກເຂົ້າໃຈ ແລະ ຖືກຕີຄວາມໝາຍໂດຍສອດຄ່ອງກັບມາດຕະຖານ ແລະ ການປະຕິບັດທາງອຸດສາຫະກຳທີ່ຍອມຮັບໂດຍທົ່ວໄປ. ທ່ານຕ້ອງສະໜອງຫຼັກຖານການປະກັນໄພຕາມການຮ້ອງຂໍຈາກ ANZ ໃນຮູບແບບດັ່ງກ່າວຕາມທີ່ ANZ ຕ້ອງການ.

## ຂໍ້ກຳນົດທົ່ວໄປ

21) ໃນກໍລະນີທີ່ທ່ານບໍ່ໄດ້ສະໜອງສິນຄ້າ / ການບໍລິການ ພາຍໃນກຳນົດເວລາ ຕາມທີ່ກຳນົດໄວ້ໃນໃບສັ່ງຊື້ສະບັບນີ້ ເນື່ອງຈາກເຫດຜົນໃດໆກໍ່ຕາມ ໂດຍບໍ່ໄດ້ຮັບການເຫັນດີເປັນລາຍລັກອັກສອນລ່ວງໜ້າຈາກ ANZ, ທ່ານມີພັນທະທີ່ຈະຕ້ອງຊຳລະເງິນຄ່າເສຍຫາຍໃຫ້ແກ້ ANZ ເປັນຈຳນວນ 0.1% ຂອງມູນຄ່າໃບສັ່ງຊື້ນີ້ ສຳລັບແຕ່ລະວັນຂອງການສົ່ງສິນຄ້າຊັກຊ້າ. ການຊຳລະຄ່າເສຍຫາຍທີ່ຊຳລະແລ້ວຂອງທ່ານ ຈະບໍ່ສົ່ງຜົນຕໍ່ຄວາມຮັບຜິດຊອບຂອງທ່ານໃນກາ

ບຊິດເຊີຍໃຫ້ແກ່ ANZ ສໍາລັບຄວາມເສຍຫາຍທັງໝົດທີ່ເກີດຂຶ້ນຈາກການສົ່ງສິນຄ້າທີ່ຊັກຊ້າຂອງທ່ານ.

22) ທ່ານຈະເກັບຮັກສາເປັນຄວາມລັບ ຂໍ້ມູນທັງໝົດ (ເຊິ່ງມີລັກສະນະເປັນຄວາມລັບ) ກ່ຽວກັບ ANZ, ທຸລະກິດ, ບໍລິສັດໃນເຄືອ, ນິຕິບຸກຄົນທີ່ກ່ຽວຂ້ອງ ຫຼື ລູກຄ້າຂອງ ANZ ທີ່ມີໄວ້ໃຫ້ແກ່ທ່ານໃນລະຫວ່າງການສະໜອງສິນຄ້າ ຫຼື ການບໍລິການ ແລະ ຈະປົກປ້ອງຂໍ້ມູນນັ້ນຈາກການນໍາໃຊ້ໂດຍບໍ່ໄດ້ຮັບອະນຸຍາດຈາກ ANZ.

23) ໂດຍບໍ່ກະທົບຕໍ່ຫຼັກເກນທົ່ວໄປຂອງຂໍ້ 22 ຂ້າງເທິງ, ANZ ຈຶ່ງແຈ້ງ ແລະ ຜູ້ສະໜອງຢືນຢັນວ່າຕົນເຂົ້າໃຈຢ່າງດີວ່າ ANZ ມີພັນທະພາຍໃຕ້ກົດໝາຍວ່າດ້ວຍທະນາຄານທຸລະກິດ ຂອງສປປ ລາວ ແລະ ລະບຽບກົດໝາຍທີ່ກ່ຽວຂ້ອງ (“ກົດໝາຍ”) ທີ່ບໍ່ໃຫ້, ເປີດເຜີຍ ຫຼື ເຜີຍແຜ່ຂໍ້ມູນຂອງລູກຄ້າໃດໆ ໃຫ້ແກ່ຝ່າຍໃດໜຶ່ງ ໂດຍບໍ່ໄດ້ຮັບການຍິນຍອມເຫັນດີຈາກລູກຄ້າ ຫຼື ຍົກເວັ້ນຕາມອະນຸຍາດ ຫຼື ກໍານົດໂດຍກົດ ໝາຍ ແລະ ການລະເມີດໜ້າທີ່ຮັກສາຄວາມລັບດັ່ງກ່າວຖືເປັນການກະທໍາຜິດພາຍໃຕ້ກົດໝາຍ. ຜູ້ສະໜອງຕົກລົງວ່າຕົນຈະບໍ່ກະທໍາ ຫຼື ເຮັດໃຫ້ມີການກະທໍາ ແລະ ຈະຕ້ອງດໍາເນີນການໃຫ້ບຸກຄະລາກອນຂອງຕົນບໍ່ກະທໍາ ຫຼື ເຮັດໃຫ້ມີການກະທໍາສິ່ງໃດໆກໍ່ຕາມທີ່ລະເມີດໜ້າທີ່ໃນການຮັກສາຄວາມລັບ.

ເພື່ອຈຸດປະສົງຂອງຂໍ້ນີ້, ຂໍ້ມູນລູກຄ້າ ໝາຍເຖິງຂໍ້ມູນລູກຄ້າ ບໍ່ວ່າໃນຮູບແບບໃດກໍ່ຕາມ, ບໍ່ວ່າຈະເປັນລາຍລັກອັກສອນ, ຮູບພາບ, ປາກເປົ່າ ຫຼື ບັນທຶກໃນສື່ໃດໆ ຫຼື ໃນທາງອື່ນໆ ເຊິ່ງກ່ຽວຂ້ອງກັບລູກຄ້າລາຍໜຶ່ງ ຫຼື ຫຼາຍລາຍຂອງ ANZ ເຊິ່ງອາດມອບໃຫ້, ສະໜອງໃຫ້ ຫຼື ຖືກເປີດເຜີຍແກ່ຜູ້ສະໜອງ ໂດຍ ANZ ໃນສ່ວນທີ່ກ່ຽວຂ້ອງກັບໃບສັ່ງຊື້ນີ້.

24) ທ່ານຮັບຮູ ແລະ ຕົກລົງເຫັນດີ ວ່າ:

ກ) ANZ ມຸ່ງໝັ້ນທີ່ຈະຈ້າງຜູ້ສະໜອງທີ່ມີການປະຕິບັດດ້ານສິ່ງແວດລ້ອມ, ຈັນຍາບັນ ແລະ ສັງຄົມ ທີ່ມີມາດຕະຖານສູງ; ແລະ

ຂ) ທ່ານຕ້ອງປະຕິບັດຕາມຫຼັກການປະຕິບັດສໍາລັບຜູ້ສະໜອງຂອງ ANZ ທີ່ເຜີຍແຜ່ຢູ່ທີ່ anz.com ແລະ ເອກະສານອື່ນໆ ທີ່ ANZ ແຈ້ງໃຫ້ທ່ານຊາບ.

25) ທ່ານຕ້ອງປະຕິບັດຕາມມາດຕະການລົງໂທດທາງເສດຖະກິດ ແລະ ການຄ້າ ທີ່ກໍານົດໂດຍອົດສະຕາລີ, ສະຫະລັດອາເມລິກາ, ສະຫະພາບເອີລົບ ຫຼື ປະເທດໃດໆ (ລວມທັງການລົງໂທດທີ່ສະໜັບສະໜູນການຕັດສິນໃຈ ຫຼື ມະຕິຂອງສະພາຄວາມໝັ້ນຄົງແຫ່ງສະຫະປະຊາຊາດ) ເຊິ່ງບັງຄັບໃຊ້ກັບການປະຕິບັດພັນທະຂອງຜູ້ສະໜອງພາຍໃຕ້ຂໍ້ຕົກລົງ.

26) ທ່ານຮັບຮູ້ວ່າ ANZ ຖືກຫ້າມບໍ່ໃຫ້ເຮັດທຸລະກໍາກັບຜູ້ສະໜອງທີ່ເປັນນິຕິບຸກຄົນທີ່ຖືກມາດຕະການລົງໂທດ ພາຍໃຕ້ກົດໝາຍຂອງປະເທດໃດໜຶ່ງ ທີ່ ANZ ຫຼື ກຸ່ມ ANZ ດໍາເນີນງານຢູ່. ANZ ໂດຍການກະທໍາທີ່ສົມເຫດສົມຜົນ ອາດປະຕິເສດການປະຕິບັດຕາມພັນທະໜຶ່ງ ຫຼື ຫຼາຍພັນທະ ພາຍໃຕ້ໃບສັ່ງຊື້ ຫຼື ຂໍ້ກໍານົດ ແລະ ເງື່ອນໄຂເຫຼົ່ານີ້, ຖ້າການປະຕິບັດຕາມພັນທະເຫຼົ່ານັ້ນ ຈະເຮັດໃຫ້ ANZ ຫຼື ສະມາຊິກຂອງກຸ່ມ ລະເມີດກົດໝາຍ, ລະບຽບການ ຫຼື ຂໍ້ຫ້າມທາງກົດໝາຍອື່ນໆ. ເພື່ອຫຼີກລ່ຽງຂໍ້ສົງໄສ, ນີ້ລວມທັງການຢຸດເຊົາການເຮັດທຸລະກໍາກັບທ່ານ ຖ້າຫາກທ່ານ ຊຶ່ງເປັນ ຫຼື ກາຍເປັນ, ຫຼື ບຸກຄົນໃດໆ (ບຸກຄົນທໍາມະດາ, ອົງກອນ ຫຼື ໜ່ວຍງານຂອງລັດ) ທີ່ກ່ຽວຂ້ອງກັບທ່ານ ເປັນ ຫຼື

ກາຍເປັນ ຜູ້ທີ່ຖືກມາດຕະການລົງໂທດທີ່ກໍານົດໂດຍປະເທດອົດສະຕາລີ,

ສະຫະພາບເອີລົບ ຫຼື ລັດຖະບານໃດໆ, ລວມທັງມາດຕະການລົງໂທດທີ່ສະໜັບສະໜູນການຕັດສິນໃຈ ຫຼື ມະຕິຂອງສະຫະປະຊາຊາດ ຫຼື ສ່ວນໃດສ່ວນໜຶ່ງ ຫຼື ໜ່ວຍງານຂອງສະຫະປະຊາຊາດ.

27) ທ່ານຈະຄຸ້ນເຄີຍ ແລະ ປະຕິບັດຕາມກົດໝາຍ ແລະ ລະບຽບການທັງໝົດກ່ຽວກັບການໃຫ້ສິນບົນ, ການສໍ້ລາດບັງຫຼວງ ແລະ ການປະຕິບັດທາງທຸລະກິດທີ່ເກືອດຫ້າມ.
ທ່ານບໍ່ໄດ້ ແລະ ຈະບໍ່ສະເໜີ, ສັນຍາ ຫຼື ເຮັດ ຫຼື ຕົກລົງທີ່ຈະເຮັດໂດຍກົງ ຫຼື ໂດຍທາງອ້ອມ ເພື່ອຈຸດປະສົງໃນການເຮັດໃຫ້ ຫຼື ຊັກຊວນຜູ້ໃດຜູ້ໜຶ່ງເພື່ອໃຫ້ມີການຕັດສິນໃຈໃນທາງທີ່ເອື້ອຜົນປະໂຫຍດຕໍ່ ANZ ຫຼື ນິຕິບຸກຄົນທີ່ຢູ່ພາຍໃຕ້ການຄວບຄຸມຂອງ ANZ: (ກ) ການປະກອບສ່ວນທາງດ້ານການເມືອງໃນທຸກຮູບແບບ ຫຼື ການຈ່າຍໃດໆໃຫ້ແກ່ເຈົ້າໜ້າທີ່ລັດ (ລວມທັງເຈົ້າໜ້າທີ່ລັດຂອງຕ່າງປະເທດ); (ຂ) ການຈ່າຍເພື່ອຊື້ຂອງຂວັນ, ຄ່າອາຫານ, ການເດີນທາງ ຫຼື ສິ່ງມີຄ່າອື່ນໆ ໃຫ້ແກ່ພະນັກງານລັດ ຫຼື ຄອບຄົວຂອງພວກເຂົາ; ຫຼື (ຄ) ການຈ່າຍເງິນ ຫຼື ຂອງຂວັນໃດໆໃຫ້ແກ່ບຸກຄົນໃດໜຶ່ງ.
ທ່ານຕ້ອງແຈ້ງໃຫ້ ANZ ຊາບເປັນລາຍລັກອັກສອນໂດຍໄວທີ່ສຸດເທົ່າທີ່ຈະເປັນໄປໄດ້ ແລະ ໃນກໍລະນີໃດໆກໍ່ຕາມ ພາຍໃນ 24 ຊົ່ວໂມງຫຼັງຈາກຮັບຮູ້ກ່ຽວກັບການລະເມີດ ຫຼື ການລະເມີດທີ່ອາດເກີດຂຶ້ນຕໍ່ຂໍ້ 27 ນີ້.

28) ໃນການປະຕິບັດຕາມພັນທະຂອງທ່ານ ພາຍໃຕ້ຂໍ້ຕົກລົງສະບັບນີ້, ທ່ານຕ້ອງ:

ກ) ປະຕິບັດຕາມກົດໝາຍ, ຂໍ້ບັງຄັບ, ລະບຽບການ ແລະ ປະມວນກົດໝາຍວ່າດ້ວຍການເປັນຂ້າທາດ ສະໄໝໃໝ່ ໃນທຸກຮູບແບບ ທີ່ບັງຄັບໃຊ້ໃນແຕ່ລະໄລຍະ; ແລະ

ຂ) ດໍາເນີນຂັ້ນຕອນທີ່ສົມເຫດສົມຜົນ ເພື່ອໃຫ້ແນ່ໃຈວ່າບໍ່ມີການເປັນຂ້າທາດສະໄໝໃໝ່ ຫຼື ການຄ້າມະນຸດ ໃນຕ່ອງໂສ້ການສະໜອງ ຫຼື ການດໍາເນີນທຸລະກິດຂອງທ່ານ ຫຼື ຂອງຜູ້ຮັບເໝົາຊ່ວງຕໍ່ ຂອງທ່ານ.

29) ໃບສັ່ງຊື້ນີ້ ຖືກຄຸ້ມຄອງໂດຍ ແລະ ຂໍ້ຂັດແຍ່ງຈະຖືກແກ້ໄຂ ພາຍໃຕ້ກົດໝາຍ ແລະ ໃນສານ ຂອງສປປ ລາວ, ແລະ ໃນຂອບເຂດທີ່ກົດໝາຍ ອະນຸຍາດ ທ່ານຕ້ອງຍື່ນເຖິງເຂດອໍານາດຂອງສານ ຂອງ ສປປ ລາວ.